ຂອບເຂດອາທິດເຮັດວຽກ ແລະ ເຄື່ອງມືສຳລັບການເຮັດຕາຕະລາງເວລາເຮັດວຽກເກີນເວລາ

ເຄື່ອງໄລ່ເລກຕາມປະຕິທິນອັນນີ້ແມ່ນສຳລັບຜູ້ບໍລິການສ່ວນບຸກຄົນ (IPs) ແລະ ລູກຄ້າເພື່ອຈະຊ່ວຍນຳຊົ່ວໂມງທີ່ຖືກນັດເວລາໄວ້. ການໃຊ້ເຄື່ອງມືອັນນີ້ຈະຊ່ວຍ IP ແລະ ລູກຄ້າເພື່ອຈະຫລີກເວັ້ນການທວງເອົາສ່ວນທີ່ກາຍເກີນ (ການເຮັດວຽກທີ່ກາຍເກີນຂອບເຂດອາທິດເຮັດວຽກຂອງ IP ແລະ ຊົ່ວໂມງປະຈຳເດືອນຂອງລູກຄ້າ) .

**ຄຳເຕືອນໃຫ້ຈື່ຈຳ:**

- ຢ່າສູ່ເຮັດວຽກຫລາຍຊົ່ວໂມງເກີນກວ່າທີ່ທ່ານມີຢູ່ໃນຂອບເຂດອາທິດເຮັດວຽກຂອງທ່ານໂດຍປາສຈາກການອະນຸມັດໂດຍກົມ DSHS
- ຢ່າສູ່ເຮັດວຽກຫລາຍຊົ່ວໂມງປະຈຳເດືອນເກີນກວ່າທີ່ລູກຄ້າຂອງທ່ານມີເງື່ອນໄຂທີ່ຈະໄດ້ຮັບ

**ຄຳແນະນຳ:**

1. **ຂອບເຂດອາທິດເຮັດວຽກ:** ຂຽນລົງໄປຂອບເຂດອາທິດເຮັດວຽກທີ່ຖືກແຕ່ງຕັ້ງໃຫ້ໂດຍກົມ DSHS ຂອງທ່ານ. ຖ້າຫາກວ່າທ່ານບໍ່ຮູ້ຈັກຂອບເຂດອາທິດເຮັດວຽກຂອງທ່ານ, ຕິດຕໍ່ຫາຜູ້ຈັດການເອກສານຂອງລູກຄ້າ.
2. ຂຽນຈຳນວນຊົ່ວໂມງ (ລວມທັງນຶ່ງສ່ວນສີ່ຂອງຊົ່ວໂມງ) ທີ່ທ່ານມີແຜນທີ່ຈະເຮັດວຽກໃນແຕ່ລະມື້ໃສ່ໃນປະຕິທິນສຳລັບແຕ່ລະເດືອນ.
3. ເຄື່ອງມືຈະຄິດໄລ່ສິ່ງຕໍ່ລົງໄປນີ້:
    a. ຈຳນວນທັງຫມົດຂອງຊົ່ວໂມງສຳລັບອາທິດເຮັດວຽກແມ່ນຢູ່ໃນແຖວຕັ້ງ **ສີຂຽວ** ແຖວທຳອິດ (ອາທິດເຮັດວຽກ = ວັນອາທິດ 12:00 am-ວັນເສົາ 11:59 pm ກາງຄືນ)
    b. ຈຳນວນທັງຫມົດຂອງຊົ່ວໂມງເຮັດວຽກເກີນເວລາສຳລັບອາທິດເຮັດວຽກແມ່ນຢູ່ໃນແຖວຕັ້ງ **ສີຂຽວ** ແຖວທີສອງ (ອາທິດເຮັດວຽກ = ວັນອາທິດ 12:00 am-ວັນເສົາ 11:59 pm )
    c. ຈຳນວນທັງຫມົດຂອງຊົ່ວໂມງທີ່ໄດ້ເຮັດວຽກສຳລັບເດືອນນັ້ນ – ອັນນີ້ໄດ້ຖືກຂຽນຢູ່ເບື້ອງຂວາມືຢູ່ໃນບອກ໌ **ສີເຫລືອງ** ທຳອິດ. ເລກອັນນີ້ຕ້ອງບໍ່ຫລາຍເກີນກວ່າຊົ່ວໂມງປະຈຳເດືອນຂອງລູກຄ້າ ຫລື ການອະນຸຍາດໃຫ້ຈ່າຍເງິນໃຫ້ປະຈຳເດືອນຂອງທ່ານ.
    d. ຈຳນວນທັງຫມົດຂອງຊົ່ວໂມງເຮັດວຽກເກີນເວລາສຳລັບເດືອນນັ້ນ - ອັນນີ້ໄດ້ຖືກຂຽນຢູ່ໃນບອກ໌ **ສີເຫລືອງ** ທຳສອງ.
    e. ຈຳນວນທັງຫມົດຂອງຊົ່ວໂມງເຮັດວຽກເກີນເວລາທີ່ກາຍເກີນຂອບເຂດສຳລັບເດືອນນັ້ນ - ອັນນີ້ໄດ້ຖືກຂຽນຢູ່ໃນບອກ໌ **ສີແດງ** . ຖ້າຫາກວ່າມີຈັກຊົ່ວໂມງທີ່ຖືກຂຽນຢູ່ໃນບອກ໌ນີ້, ທ່ານໄດ້ເຮັດວຽກ **ຫລາຍກວ່າ** ຂອບເຂດອາທິດເຮັດວຽກຂອງທ່ານແລ້ວ. ທ່ານຈະຕ້ອງໄດ້ທຳການປ່ຽນແປງຢູ່ໃນເຄື່ອງຄິດໄລ່ໃນປະຕິທິນເພື່ອຈະດັດແປງອັນນີ້.

ທຸກໆຊົ່ວໂມງທີ່ຖືກຕີເຂົ້າໃສ່ກາຍເກີນ 40 ຊົ່ວໂມງຢູ່ໃນອາທິດເຮັດວຽກຈະຖືກຄິດໄລ່ວ່າເປັນຂອບເຂດຊົ່ວໂມງເຮັດວຽກເກີນເວລາປະຈຳເດືອນ

ອັນນີ້ແມ່ນວ່າການຄິດໄລ່ຈະເຮັດວຽກແນວໃດ:

*ຕົວຢ່າງ:*

*ຂອບເຂດອາທິດເຮັດວຽກຂອງທ້າວໂຣເຊແມ່ນ 46 ຊົ່ວໂມງ.  ຈຳນວນຂອງຊົ່ວໂມງເຮັດວຽກເກີນເວລາປະຈຳເດືອນທີ່ທ້າວໂຣເຊສາມາດເຮັດໄດ້ຂຶ້ນນຳຈຳນວນຂອງວັນເສົາທີ່ລາວຈະເຮັດວຽກຢູ່ໃນເດືອນນັ້ນ.*

***ການຄິດໄລ່ສຳລັບເດືອນທີ່ມີ 5 ວັນເສົາ:*** *46 ຊົ່ວໂມງ – 40 ຊົ່ວໂມງ = 6 (ຊົ່ວໂມງເຮັດວຽກເກີນເວລາ) x 5 (ວັນເສົາ) =* ***30 ຊົ່ວໂມງ OT ປະຈຳເດືອນ***

***ການຄິດໄລ່ສຳລັບເດືອນທີ່ມີ 4 ວັນເສົາ:*** *46 ຊົ່ວໂມງ – 40 ຊົ່ວໂມງ = 6 (ຊົ່ວໂມງເຮັດວຽກເກີນເວລາ) x 4 (ວັນເສົາ) =* ***24 ຊົ່ວໂມງ OT ປະຈຳເດືອນ***

*ລູກຄ້າທີ່ທ້າວໂຣເຊເຮັດວຽກໃຫ້ຕ້ອງການໃຫ້ລາວເຮັດວຽກໃນຕາຕະລາງເວລາທີ່ປ່ຽນໄປມາໄດ້ໃນລະຫວ່າງເດືອນນັ້ນ. ທ້າວໂຣເຊສາມາດເຮັດໄດ້ນານເທົ່ານານທີ່ລາວບໍ່ເຮັດວຽກຫລາຍກວ່າ 30 ຊົ່ວໂມງຂອງວຽກເກີນເວລາຢູ່ໃນເດືອນທີ່ມີ 5 ວັນເສົາ, ຫລື 24 ຊົ່ວໂມງຂອງວຽກເກີນເວລາຢູ່ໃນເດືອນທີ່ມີ 4 ວັນເສົາ. ບອກ໌ ສີເຫລືອງ ຢູ່ໃນເຄື່ອງມືຈະຊ່ວຍທ້າວໂຣເຊໃຫ້ຢູ່ພາຍໃນຂອບເຂດຊົ່ວໂມງເຮັດວຽກເກີນເວລາປະຈຳເດືອນຂອງລາວ.*